multi cultural communication

Produced by NSW HEALTH DEPARTMENT

Lao
April 2004
[BHC-6975]

# ການປ້ອງກັນເດັກນ້ອຍແລະຄົນໄວໜຸ່ມນ້ອຍ ແລະການລາຍງານຕໍ່ທາງກະຊວງບໍລິການຊຸມຊົນ Department of Community Services

**Protecting Children and Young People and reporting to the Department of Community Services**

ຂໍ້ຄວາມຕໍ່ໄປນີ້ແມ່ນໄດ້ກະທຳອອກໂດຍກະຊວງສາທາລະນະສຸກຂອງຣັດ ນິວຊາວແວວສ໌ (NSW Department of Health).

ບາງເທື່ອເອົາລູກຂອງທ່ານໄປບ່ອນບໍລິການສຸກຂຸພາບຕ່າງໆອາດແມ່ນການປະສົບການອັນລຳບາກສຳລັບຜູ້ເປັນພໍ່ແມ່ທັງຫຼາຍ. ມັນແມ່ນຍາກຂຶ້ນກວ່ານີ້ອີກຕອນພວກໂອກາດທີ່ມີພະນັກງານສຸກຂະພາບຜູ້ໃດຜູ້ນຶ່ງເກີດມີຄວາມກັງວົນເປັນຫ່ວງກ່ຽວກັບຄວາມຢູ່ດີກິນດີຂອງເດັກຜູ້ໃດຜູ້ນຶ່ງ ແລະຈຳເປັນຕ້ອງໄດ້ຕິດຕໍ່ຫາທາງກະຊວງບໍລິການຊຸມຊົນ Department of Community Services (ຮ້ອງສັ້ນໆວ່າ DoCS).

ມັນສຳຄັນສຳລັບຜູ້ເປັນພໍ່ແມ່ນທັງຫຼາຍທີ່ຈະຕ້ອງເຂົ້າໃຈ ວ່າ ພາຍໃຕ້ກົດໝາຍເຣື່ອງເດັກນ້ອຍແລະຄົນໄວໜຸ່ມທັງຫຼາຍ (ການດູແລແລະການປ້ອງກັນ) ປີ 1998 ພະນັກງານສຸກຂະພາບໝົດທຸກຄົນທີ່ເກີດມີຄວາມກັງວົນເປັນຫ່ວງວ່າມີເດັກຄົນໃດຄົນນຶ່ງອາດຈະຖືກທາລຸນລ້ຽງດູບໍ່ດີຫຼືວ່າລະເລີຍ ຈະຕ້ອງລາຍງານເຣື່ອງນີ້ໃຫ້ທາງຫ້ອງການ DoCS. ຖ້າວ່າມີແນວສະແດງບອກວ່າເດັກຄົນໃດຄົນນຶ່ງອາດຈະຕົກໃນອັນຕະລາຍ, ພະນັກງານສຸກຂະພາບຜູ້ນັ້ນບໍ່ມີທາງເລືອກກ່ຽວກັບການລາຍງານ. ນີ້ອາດແມ່ນສັບສົນຫຼາຍສຳລັບຜູ້ເປັນພໍ່ແມ່ ແລະລຳບາກໃຈສຳລັບພະນັກງານສຸກຂະພາບທັງຫຼາຍ.

ເດັກນ້ອຍແລະຄົນໄວໜຸ່ມທັງຫຼາຍອາດຈະ ‘ຕົກໃນອັນຕະລາຍ’ ເວລາຜ່ານມາພວກເຂົາ ຫຼືວ່າໃນອະນາຄົດອາດຈະ:

- ໄດ້ຖືກທາລຸນລ້ຽງດູບໍ່ດີຫຼືວ່າຖືກປະພຶດນຳແບບບໍ່ດີທາງຮ່າງກາຍຫຼືວ່າທາງເພດ
- ໄດ້ຢູ່ໃນເຮືອນທີ່ມີຄວາມຮຸນແຮງພາຍໃນຄອບຄົວ
- ໄດ້ເປັນທຸກທໍລະມານກັບຄວາມເຈັບປວດທາງຈິດໃຈຢ່າງຮ້າຍແຮງດ້ວຍການປະພຶດຂອງຜູ້ເປັນພໍ່ແມ່ທັງຫຼາຍຂອງພວກເຂົາ
- ບໍ່ໄດ້ຮັບໃນສິ່ງອັນສຳຄັນຕ່າງໆ ເຊັ່ນອາຫານ, ຄວາມປອດໄພ, ເຄື່ອງນຸ່ງຫົ່ມແລະຄວາມຮັກ
- ຫຼືວ່າ, ຄົນທີ່ກຳລັງດູແລພວກເຂົາຢູ່ນັ້ນບໍ່ສາມາດ ຫຼືວ່າບໍ່ເຕັມໃຈຈັດການເຣື່ອງການດູແລທາງແພດໃຫ້ພວກເຂົາ.

ເຣື່ອງທັງຫຼາຍເຫຼົ່ານີ້ຖືກມີການສົນທະນາເພີ້ມເຕີມອີກໃນໃບຂໍ້ມູນຄວາມຈິງອັນອື່ນ ທີ່ໄດ້ກະທຳອອກ ໂດຍຫ້ອງການບໍລິການແຈ້ງຂ່າວສຸກຂະພາບນາໆພາສາ (Multicultural Health Communication Service).

ໜ້າທີ່ຂອງພະນັກງານສຸກຂະພາບທັງຫຼາຍແມ່ນໃຫ້ເຮັດວຽກກັບຄອບຄົວຕ່າງໆ ເພື່ອຊ່ວຍເຫຼືອພວກ ເຂົາໃຫ້ຢູ່ຢ່າງມີສຸກຂະພາບດີ. ເວລາສ່ວນມາກ ເຖິງຖ້າແມ່ນວ່າພະນັກງານສຸກຂະພາບຈຳເປັນຕ້ອງ ໄດ້ເຮັດລາຍງານໃຫ້ຫ້ອງການ DoCS ພວກເຂົາກໍຍັງຕ້ອງການເຮັດວຽກກັບຄອບຄົວນັ້ນ. ມັນບໍ່ ແມ່ນໜ້າທີ່ຂອງພະນັກງານສຸກຂະພາບທີ່ຈະຕ້ອງພິສູດຄວາມຈິງວ່າໄດ້ມີເດັກຄົນໃດຄົນນຶ່ງ ຖືກ ທາລຸນລ້ຽງດູບໍ່ດີຫຼືວ່າລະເລີຍ - ມີແຕ່ລາຍງານເຣື່ອງອັນຕະລາຍນີ້ໃຫ້ຫ້ອງການ DoCS.

ແມ່ນໜ້າທີ່ຂອງຫ້ອງການ DoCS ທີ່ຈະສ້າງຫຼັກຖານວ່າໄດ້ມີເດັກຖືກທາລຸນລ້ຽງດູແບບບໍ່ດີຫຼືວ່າບໍ່. ໃຜຜູ້ໃດກໍແລ້ວທີ່ມີຄວາມກັງວົນເປັນຫ່ວງກ່ຽວກັບຄວາມປອດໄພ, ຄວາມຢູ່ກິນດີຫຼືວ່າຄວາມສະບາຍ ດີຂອງເດັກຄົນໃດຄົນນຶ່ງ ສາມາດໂທລະສັບແຈ້ງໄປຫາສາຍຊ່ວຍເຫຼືອຂອງຫ້ອງການ DoCS Helpline –ໄດ້ຕາມນຳເບີ 132-111 (ຕະຫຼອດ 24 ຊົ່ວໂມງເປັນພາສາອັງກິດເທົ່ານັ້ນ). ຖ້າວ່າທ່ານ ຕ້ອງການຄວາມຊ່ວຍເຫຼືອໃນການໂທລະສັບເປັນພາສາອັງກິດ, ໂທລະສັບຫາຫ້ອງການບໍລິການແປ ພາສາແລະນາຍພາສາ Translating and Interpreting Service (TIS) ຕາມນຳເບີ 131 450.

ການກ່ຽວຂ້ອງຂອງຫ້ອງການ DoCs ກັບຄອບຄົວໃດຄອບຄົວນຶ່ງແມ່ນສ່ວນມາກມີຄວາມລຳບາກ ແຕ່ວ່າ, ສາມາດແມ່ນການປະສົບການໃນທາງທີ່ດີໄດ້ເໝືອນກັນ. ເວລາໄດ້ມີລາຍງານຖືກທຳຂຶ້ນມາ:

- ອາດມີການຕັດສິນໃຈໂດຍບໍ່ໃຫ້ມີການສືບສວນ
- ຫ້ອງການ DoCs ອາດໄປພົບພໍ້ກັບທາງຄອບຄົວຕ່າງໆເພື່ອສືບສວນວ່າທຸກສິ່ງຢ່າງນັ້ນຍັງທຳ ມະດາຢູ່.
- ຫ້ອງການ DoCs ອາດໄປພົບພໍ້ກັບທາງຄອບຄົວຕ່າງໆເພື່ອເວົ້າລົມເຣື່ອງວິທີທາງຕ່າງໆ ເພື່ອຊ່ວຍຮັກສາໃຫ້ເດັກທັງຫຼາຍນັ້ນປອດໄພ ລວມທັງການສົ່ງໃຫ້ໄປຫາຫ້ອງການອື່ນໆທີ່ ສາມາດຊ່ວຍເຫຼືອຜູ້ເປັນພໍ່ແມ່ທັງຫຼາຍໄດ້.
- ຫ້ອງການ DoCs ອາດຕັດສິນໃຈກັບຄອບຄົວຕ່າງໆເປັນຈຳນວນໜ້ອຍໆເທົ່ານັ້ນ ທີ່ວ່າຕ້ອງ ໄດ້ເອົາເຣື່ອງໄປຫາທາງສານ ເພື່ອໃຫ້ແນ່ນອນວ່າເດັກທັງຫຼາຍນັ້ນແມ່ນມີຄວາມປອດໄພດີ.

ທ່ານສາມາດຊອກເອົາລາຍລະອຽດຂໍ້ມູນເຣື່ອງສຸກຂະພາບເພີ້ມໄດ້ໃນພາສາຂອງທ່ານ ໃນຈຸດວົງ ການສານຂອງທາງຫ້ອງການແຈ້ງຂ່າວສານນາໆພາສາ Multicultural Communication website ຢູ່ຈຸດ http://mhcs.health.nsw.gov.au.

ນຳເບີໂທລະສັບຕ່າງໆແມ່ນຖືກຕ້ອງຕ່ອນເວລາພິມອອກ ແຕ່ວ່າບໍ່ໄດ້ສືບຕໍ່ກວດເບິ່ງໃຫ້ຖືກຕ້ອງ ຕະຫຼອດ. ທ່ານອາດຕ້ອງໄດ້ກວດເບິ່ງນຳເບີຕ່າງໆນັ້ນໃນປຶ້ມລາຍການນຳເບີໂທລະສັບ.